ເຕັກນິກການລ້ຽງງົວລະດູແລ້ງ

ບັນຫາທີ່ຢາກແກ້ໄຂ:

ການລ້ຽງງົວ, ຄວາຍ ແລະ ແບ້ ຂອງປະຊາຊົນລາວ ສ່ວນໃຫຍ່ຍັງລ້ຽງແບບອາໄສທຳມະຊາດຢູ່ ໂດຍອາໃສຫຍ້າ ຫຼື ພືດອາຫານສັດທີ່ມີຕາມທຳມະຊາດ ແລະ ຕາມລະດູການ, ເຊິ່ງຫຍ້າຕາມທຳມະຊາດສ່ວນໃຫຍ່ແລ້ວສະໜອງສານອາຫານຍັງບໍ່ພຽງພໍຕໍ່ຄວາມຕ້ອງການຂອງສັດໃນແຕ່ລະວັນ ໂດຍສະເພາະໃນຊ່ວງລະດູແລ້ງສັດຈະຂາດສານອາຫານເນື່ອງຈາກ ປະລິມານອາຫານຕາມທຳມະຊາດ ມີປະລິມານໜ້ອຍ ລວມທັງຂາດແຂນສານອາຫານເຊັ່ນ: ທາດຊີ້ນ, ພະລັງງານ ແລະ ແຮ່ທາດຕ່າງໆ ສົ່ງຜົນໃຫ້ ສັດລ້ຽງຂອງຊາວກະສິກອນຈ່ອຍຜອມ, ປະສົມພັນຕິດຍາກ ທັງເຮັດໃຫ້ສຸຂະພາບອ່ອນເພຍ ເກີດພະຍາດບຽດບຽນໄດ້ງ່າຍ.

ກິດຈະກຳ:

ຄະນະກະເສດສາດ ໄດ້ມີການສຶກສາທົດລອງແລະພັດທະນາ ຄົ້ນຄວ້າຫາທາງ ແກ້ໄຂບັນຫາດັ່ງກ່າວ ໂດຍນຳໃຊ້ວັດຖຸດິບທີ່ມີໃນທ້ອງຖິ່ນ, ສິ່ງເສດເຫຼືອຈາກການກະສິກຳ-ອຸດສາຫະກຳ ເພື່ອເພີ່ມຜົນຜະລິດແກ່ການລ້ຽງງົວ-ຄວາຍ ແລະ ແບ້ເຊິ່ງໄດ້ສຶກສາຫາວິທີການເກັບຖະໜອມຫຍ້າ ຫຼື ພືດອາຫານສັດຈາກລະດູຝົນມາໃຫ້ສັດກິນໃນລະດູແລ້ງ ໂດຍນຳໃຊ້ເຕັກນິກຫຍ້າໝັກ (Silage), ເຟືອງໝັກ ແລະ ການເສີມສານອາຫານໃຫ້ສັດລ້ຽງ ໂດຍກ້ອນແຮ່ທາດ-ອາຫານເສີມ (Mineral Feed Block, MFB) ເຊິ່ງກ້ອນແຮ່ທາດ-ອາຫານເສີມນີ້ ໄດ້ລວມແຫຼ່ງທາດຊີ້ນ, ທາດພະລັງງານ ແລະ ແຮ່ທາດເຂົ້າມຳໃນໜຶ່ງກ້ອນ ທີ່ຈຳເປັນຕໍ່ການດຳລົງຊີວິດແກ່ສັດລ້ຽງ ແລະ ເຮັດໃຫ້ສັດລ້ຽງມີການຈະເລີນເຕີບໃຫຍ່ໄດ້ດີຂຶ້ນ, ສຸຂະພາບແຂງແຮງ ແລະ ປະສົມພັນຕິດງ່າຍ ສົ່ງຜົນໃຫ້ປະສິດທິພາບການຜະລິດສັດດີຂຶ້ນ.

ຜົນໄດ້ຮັບ:

ຈາກຜົນການທົດລອງເຫັນວ່າ ສາມາດຄ້ຳປະກັນສະບຽງອາຫານສັດໄດ້ ໂດຍມີການຈັດການໃຫ້ສັດລ້ຽງມີອາຫານກິນຕະຫຼອດປີ, ເຊິ່ງການເຮັດຫຍ້າໝັກ-ເຟືອງໝັກ ເຫັນວ່າສາມາດເກັບຖະໜອມຫຍ້າໝັກໄວ້ໄດ້ດົນ 3-6 ເດືອນ ເຮັດໃຫ້ຊາວກະສິກອນສາມາດມີຫຍ້າໃຫ້ສັດກິນໄດ້ຕະຫຼອດປີ ນອກຈາກນັ້ນ ກ້ອນແຮ່ທາດອາຫານເສີມ ສາມາດເສີມທາດບຳລຸງໃຫ້ແກ່ສັດເຮັດໃຫ້ສັດລ້ຽງມີການຈະເລີນເຕີບໂຕໄດ້ປະມານ 200-300 ກລາມຕໍ່ມື້ ໃນຊ່ວງລະດູແລ້ງ.

ປັດໄຈສູ່ຜົນສຳເລັດ:

ການຄົ້ນຄວ້າທົດລອງແລະຜົນສຳເລັດໄດ້ ຍ້ອນການສະໜັບສະໜູນຈາກອົງການຈັດຕັ້ງ, ຜູ້ຊ່ວຍນັກຄົ້ນຄວ້າ, ນັກສຶກສາ ແລະ ການຮ່ວມມືຂອງຊາວກະສິກອນ ໂດຍຫຼາຍຢ່າງຜ່ານມາໄດ້ຖືກນຳໃຊ້ພາຍໃນ ຄະນະກະເສດສາດ ແລະ ໄດ້ເຜີຍແຜ່ສູ່ຊາວກະສິກອນຜູ້ລ້ຽງງົວຜ່ານ ທາງຟາມສາທິດ ແລະ ສື່ອອນລາຍຕ່າງໆ.

ສິ່ງທ້າທາຍ:

ການສຶກສາຄົ້ນຄວ້າຍັງຂາດທຶນສະໜັບສະໜູນຫຼາຍໆດ້ານ ແລະ ການນຳໃຊ້ຜົນການຄົ້ນຄວ້າດັ່ງກ່າວ ເຮັດແນວໃດຜົນສຶກສາຄົ້ນຄວ້າເຫຼົ່ານີ້ຈະຖືກຍອມຮັບ ແລະ ນຳໃຊ້ ເພື່ອຮັບໃຊ້ຊາວກະສິກອນຜູ້ລ້ຽງສັດເຮົາຢ່າງແພ່ຫຼາຍຂຶ້ນ.

ຂໍ້ສະເໜີແນະ:

ການນຳໃຊ້ຜົນດັ່ງກ່າວຊາວກະສິກອນຄວນໄດ້ຮັບການແນະນຳແລະມີການຮຽນຮູ້ຈາກນັກວິຊາການ ເພື່ອເຮັດຄວາມເຂົ້າໃຈໃຫ້ທ່ອງແທ້ ແລະ ສ້າງປະສົບການໃຫ້ຫຼາຍ ເພື່ອປ້ອງກັນຄວາມສ່ຽງທີ່ຈະເກີດຂຶ້ນຈາກການລ້ຽງສັດຂອງຕົນເອງ.

ສະໜັບສະໜຸນໂດຍ:
ໂຄງການ-ສົ່ງເສີມກະສິກຳຮອບດ້ານ ບສກຮ
LURAS Lao Upland Rural Advisory Service